ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 407/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 10 ກໍລະກົດ 2020

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງທະນະບັດໃນຂອດຈໍລະຈອນ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ການຄົ້ນຄວ້າ ແລະ ນໍາສະເໜີ ຂອງກົມພິມຈໍາໜ່າຍ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ ແລະ ລະບຽບການກ່ຽວກັບການຄຸ້ມຄອງ, ຕິດຕາມກວດກາ, ການຮັກສາ, ການນໍາໃຊ້, ການເຄື່ອນຍ້າຍ ແລະ ການແລກປ່ຽນ ທະນະບັດທີ່ທະນາຄານແຫ່ງ ສປປ ລາວ ພິມຈໍາໜ່າຍອອກສູ່ຂອດຈໍລະຈອນ ໃຫ້ມີປະສິດທິພາບ ແນໃສ່ຍົກສູງຄຸນຄ່າ ແລະ ສະຖຽນລະພາບເງິນຕາແຫ່ງຊາດ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຄຸ້ມຄອງທະນະບັດໃນຂອດຈໍລະຈອນ**

ທະນະບັດໃນຂອດຈໍລະຈອນ ແມ່ນເງິນກີບທີ່ທະນາຄານແຫ່ງ ສປປ ລາວ ພິມຈໍາໜ່າຍສູ່ສັງຄົມຢູ່ ສປປ ລາວ.

ການຄຸ້ມຄອງທະນະບັດໃນຂອດຈໍລະຈອນ ແມ່ນການຄຸ້ມຄອງການເຄື່ອນໄຫວຕ່າງໆ ທີ່ກ່ຽວຂ້ອງກັບທະນະບັດໃນຂອດຈໍລະຈອນ ເປັນຕົ້ນ ການຮັກສາ, ການນໍາໃຊ້, ການເຄື່ອນຍ້າຍ, ການແລກປ່ຽນທະນະບັດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການຄຸ້ມຄອງທະນະບັດໃນຂອດຈໍລະຈອນ.

## ໝວດທີ 2
## ລັກສະນະຂອງທະນະບັດໃນຂອດຈໍລະຈອນ

**ມາດຕາ 4 ທະນະບັດດີ**

ທະນະບັດດີ ແມ່ນທະນະບັດທີ່ຢູ່ໃນສະພາບ ບໍ່ຈີກຂາດ, ບໍ່ພັບຫຍໍ້, ບໍ່ມີຮອຍຂີດຂຽນ, ສັນຍາລັກຕ່າງໆ, ຮູບພາບ, ສີສັນ ແລະ ເສັ້ນລວດລາຍໃນທະນະບັດ ມີຄວາມຊັດເຈນດີ ໂດຍແບ່ງສະພາບທະນະບັດດີ ສາມ ລະດັບ ດັ່ງນີ້:

1. ທະນະບັດດີ ແຕ່ ແປດສິບສ່ວນຮ້ອຍ (80%) ຫາ ໜຶ່ງຮ້ອຍສ່ວນຮ້ອຍ (100%)
   - ເຈ້ຍ: ຍັງແຂງຫຼາຍ, ສີເຈ້ຍຍັງໃໝ່, ມີຮອຍພັບໜ້ອຍໜຶ່ງ;
   - ສີພິມ: ມີຄວາມເຂັ້ມຊັດເຈນດີ, ເສັ້ນລວດລາຍທົ່ວໄປເຫັນໄດ້ຈະແຈ້ງ;
   - ຄວາມສະອາດ: ທົ່ວໃບທະນະບັດຍັງໃໝ່, ມີຮ່ອງຮອຍຂອງການນຳໃຊ້ໜ້ອຍໜຶ່ງ.
2. ທະນະບັດດີ ແຕ່ ເຈັດສິບສ່ວນຮ້ອຍ (70%) ຫາ ເຈັດສິບເກົ້າສ່ວນຮ້ອຍ (79%)
   - ເຈ້ຍ: ຍັງແຂງ, ເລີ່ມມີຮອຍເຫຼືອງ, ມີຮອຍພັບໜ້ອຍໜຶ່ງ;
   - ສີພິມ: ເສັ້ນລວດລາຍທົ່ວໄປຍັງເຫັນໄດ້ຊັດເຈນ ແຕ່ສີເລີ່ມຈາງ;
   - ຄວາມສະອາດ: ບາງຈຸດມີຮອຍເປື້ອນ ແຕ່ສ່ວນຫຼາຍໃບທະນະບັດຍັງສະອາດ.
3. ທະນະບັດດີ ແຕ່ ຫົກສິບສ່ວນຮ້ອຍ (60%) ຫາ ຫົກສິບເກົ້າສ່ວນຮ້ອຍ (69%)
   - ເຈ້ຍ: ຍັງໜັ້ນໜຽວ ແຕ່ຄວາມແຂງຫຼຸດລົງ, ເລີ່ມອອກສີເຫຼືອງ, ມີຮອຍພັບພໍເຫັນໄດ້;
   - ສີພິມ: ເສັ້ນລວດລາຍຍັງຊັດເຈນ ແຕ່ສີເລີ່ມເກົ່າຫຼາຍຂຶ້ນ;
   - ຄວາມສະອາດ: ມີຮອຍເປື້ອນຢູ່ໃນທະນະບັດ.

**ມາດຕາ 5 ທະນະບັດເສື່ອມຄຸນນະພາບ**

ທະນະບັດເສື່ອມຄຸນນະພາບ ແມ່ນທະນະບັດທີ່ມີລັກສະນະບໍ່ສົມບູນ ດັ່ງນີ້:

1. ເຈ້ຍອ່ອນ ຫຼື ມີຮອຍພັບ,ຈີກຂາດທັງໝົດ ຫຼື ຂາດບາງສ່ວນ, ຂາດເປັນປ່ອງ ຫຼື ເຈາະຮູ;
2. ໃບທະນະບັດເກົ່າ, ມີຮອຍເປື້ອນ, ຖືກທາດເຄມີ, ຖືກຊັກ, ຖືກນ້ຳມັນ, ຖືກນ້ຳສີຕ່າງໆ ເຮັດໃຫ້ ເສັ້ນລວດລາຍສັນຍາລັກຕ່າງໆ ຂອງໃບທະນະບັດ ຖືກລຶບ, ບໍ່ຊັດເຈນ ຫຼື ປ່ຽນໄປຈາກເດີມ;
3. ຖືກປວກກັດ ຫຼື ຖືກໄຟໄໝ້ສ່ວນໃດສ່ວນໜຶ່ງ;
4. ຖືກຕັດ, ຖືກຂີດຂຽນ, ຕິດກາວ ຫຼື ຕິດສະກັອດ;
5. ຮູບພາບ, ສີເສັ້ນລວດລາຍ ຈືດຈາງ, ສີບໍ່ຊັດເຈນ ຫຼື ປ່ຽນຈາກສີເດີມ.

## ໝວດທີ 3
## ການຮັກສາ, ການນຳໃຊ້ ແລະ ການນຳອອກ ທະນະບັດ

**ມາດຕາ 6 ການຮັກສາທະນະບັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງຮັກສາທະນະບັດທີ່ພິມຈຳໜ່າຍອອກສູ່ຂອດຈໍລະຈອນ ໃຫ້ຢູ່ໃນສະພາບທີ່ດີ, ຫຼີກເວັ້ນການພັບ, ຫຍໍ້, ໜິບ, ເຈາະ, ຂີດຂຽນໃສ່ໃບທະນະບັດ ແລະ ອື່ນໆ ທີ່ເປັນການເຈດຕະນາທຳລາຍທະນະບັດ, ເຮັດໃຫ້ໃບທະນະບັດເປື້ອນ ຫຼື ເສື່ອມຄຸນນະພາບ ກ່ອນກຳນົດອາຍຸການນຳໃຊ້.

**ມາດຕາ 7 ການນຳໃຊ້ທະນະບັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດນຳໃຊ້ທະນະບັດໃນຂອດຈໍລະຈອນ ເຂົ້າໃນການຊຳລະຄ່າສິນຄ້າ, ບໍລິການ ແລະ ໜີ້ສິນ. ກໍລະນີມີຈຸດປະສົງນຳໃຊ້ຮູບພາບໃບທະນະບັດປະເພດຕ່າງໆ ເຂົ້າໃນສື່ໂຄສະນາສິນຄ້າ ແລະ ບໍລິການ ຫຼື ນຳໃຊ້ເຂົ້າໃນສື່ອອນລາຍ ຕ້ອງເປັນຮູບພາບທະນະບັດທີ່ບໍ່ເຕັມໃບ.

ກໍລະນີເປັນຮູບພາບທະນະບັດເຕັມໃບ ຫຼື ເປັນຮູບສີ ຕ້ອງມີຂະໜາດບໍ່ເທົ່າກັບທະນະບັດຕົວຈິງ.

**ມາດຕາ 8 ການນຳອອກທະນະບັດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ສາມາດນຳທະນະບັດອອກ ສປປ ລາວ ໃນມູນຄ່າທຽບເທົ່າບໍ່ເກີນ ໜຶ່ງຮ້ອຍ ລ້ານກີບ.

ກໍລະນີທີ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຕ້ອງການນຳທະນະບັດອອກ ສປປ ລາວ ຫຼາຍກວ່າມູນຄ່າ ໜຶ່ງຮ້ອຍ ລ້ານກີບ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາທະນາຄານແຫ່ງ ສປປ ລາວ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ).

ກໍລະນີທີ່ນຳທະນະບັດຫຼາຍປະເພດອອກພ້ອມກັນ ຕ້ອງປະຕິບັດຕາມອັດຕາສ່ວນ ດັ່ງນີ້:

- ໃບ 100.000 ກີບ ບໍ່ເກີນ ຫົກສິບສ່ວນຮ້ອຍ (60%);
- ໃບ 50.000 ກີບ ບໍ່ເກີນ ຊາວສ່ວນຮ້ອຍ (20%);
- ໃບ 20.000 ກີບ ບໍ່ເກີນ ສິບສ່ວນຮ້ອຍ (10%);
- ໃບ 10.000 ກີບ ບໍ່ເກີນ ຫ້າສ່ວນຮ້ອຍ (5%);
- ໃບ 5.000 ກີບ ບໍ່ເກີນ ສາມຈຸດຊາວຫ້າສ່ວນຮ້ອຍ (3,25%);
- ໃບ 2.000 ກີບ ບໍ່ເກີນ ໜຶ່ງສ່ວນຮ້ອຍ (1%);
- ໃບ 1.000 ກີບ ບໍ່ເກີນ ສູນຈຸດຫ້າສ່ວນຮ້ອຍ (0,5%);
- ໃບ 500 ກີບ ບໍ່ເກີນ ສູນຈຸດຊາວຫ້າສ່ວນຮ້ອຍ (0,25%).

## ໝວດທີ 4
## ລັກສະນະຂອງທະນະບັດທີ່ສາມາດ ຫຼື ບໍ່ສາມາດ ແລກປ່ຽນ

**ມາດຕາ 9 ທະນະບັດທີ່ສາມາດແລກປ່ຽນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດແລກປ່ຽນທະນະບັດດີ ຈາກປະເພດໜຶ່ງ ເປັນປະເພດອື່ນໄດ້ ໂດຍຈະໄດ້ເຕັມມູນຄ່າຂອງປະເພດໃບທະນະບັດທີ່ນຳມາແລກປ່ຽນ. ນອກຈາກນັ້ນ ຍັງສາມາດແລກປ່ຽນທະນະບັດທີ່ມີລັກສະນະ ດັ່ງນີ້:

1. ຂາດເຄິ່ງໃບທາງລວງຕັ້ງ ຈະເປັນຂ້າງຊ້າຍ ຫຼື ຂ້າງຂວາ ຊຶ່ງສາມາດແລກປ່ຽນໄດ້ເຄິ່ງໜຶ່ງຂອງມູນຄ່າ ຂອງປະເພດໃບທະນະບັດນັ້ນ;

2. ຂາດເຄິ່ງໃບທາງລວງຕັ້ງ ແລະ ເປັນທະນະບັດປະເພດໃບດຽວກັນ ເມື່ອຕໍ່ໃສ່ກັນແລ້ວມີຄຸນລັກສະນະຂອງທະນະບັດທີ່ຄົບຖ້ວນ ຊຶ່ງສາມາດແລກປ່ຽນໄດ້ເຕັມມູນຄ່າຂອງປະເພດໃບທະນະບັດນັ້ນ;

3. ຂາດຫາຍໄປສ່ວນໃດສ່ວນໜຶ່ງ ເນື່ອງຈາກຖືກໄຟໄໝ້, ຖືກປວກກັດ, ຈີກຂາດ, ແຕ່ສ່ວນທີ່ເຫຼືອຂອງໃບທະນະບັດ ຍັງເຫຼືອ ສອງສ່ວນສາມ ຊຶ່ງສາມາດແລກປ່ຽນໄດ້ເຕັມມູນຄ່າຂອງປະເພດໃບທະນະບັດນັ້ນ;

4. ຖືກໄຟໄໝ້ສ່ວນໃດສ່ວນໜຶ່ງ, ຖືກທາດເຄມີ, ຖືກນ້ຳມັນ ຫຼື ຖືກນ້ຳສີຕ່າງໆ ຊຶ່ງເຮັດໃຫ້ເສັ້ນລວດລາຍ ຫຼື ສັນຍາລັກຕ່າງໆໃນໃບທະນະບັດ ປ່ຽນສີຈາກສີເດີມ ເນື່ອງຈາກເຫດສຸດວິໄສ ຫຼື ບໍ່ເຈດຕະນາ ແຕ່ຍັງຢູ່ໃນສະພາບເຕັມໃບ ຖ້າພິສູດໄດ້ວ່າເປັນທະນະບັດແທ້ ສາມາດແລກປ່ຽນໄດ້ເຕັມມູນຄ່າຂອງປະເພດໃບທະນະບັດນັ້ນ;

5. ເກົ່າ, ເຈ້ຍອ່ອນປຽກ, ຂາດບາງບ່ອນ, ສີບໍ່ຊັດເຈນ ແຕ່ໃບທະນະບັດຍັງມີລັກສະນະຄົບຖ້ວນ ຈຶ່ງສາມາດແລກປ່ຽນໄດ້ເຕັມມູນຄ່າຂອງປະເພດໃບທະນະບັດນັ້ນ.

**ມາດຕາ 10 ສະຖານທີ່ແລກປ່ຽນທະນະບັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດແລກປ່ຽນທະນະບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ ຢູ່ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດ ແລະ ໜ່ວຍບໍລິການຂອງທະນາຄານທຸລະກິດທຸກແຫ່ງ ໃນຂອບເຂດທົ່ວປະເທດ ໂດຍບໍ່ມີຄ່າທຳນຽມ ຫຼື ຄ່າບໍລິການໃດໆ ໃນການແລກປ່ຽນດັ່ງກ່າວ.

ກໍລະນີເປັນທະນະບັດ ທີ່ມີຄວາມເສຍຫາຍສ່ວນໃດສ່ວນໜຶ່ງ ຈາກອັກຄີໄພ ຫຼື ຈາກການເກັບມ້ຽນ ຕ້ອງມີການຢັ້ງຢືນຈາກອົງການປົກຄອງທີ່ກ່ຽວຂ້ອງ ຈຶ່ງພິຈາລະນາປ່ຽນໃຫ້ຕາມລັກສະນະທະນະບັດ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 11 ທະນະບັດທີ່ບໍ່ສາມາດແລກປ່ຽນ**

ທະນະບັດທີ່ບໍ່ສາມາດແລກປ່ຽນ ມີລັກສະນະ ດັ່ງນີ້:

1. ຂາດເປັນສອງສ່ວນທາງລວງຍາວ ຫຼື ຂາດຈາກແຈໜຶ່ງຫາອີກແຈໜຶ່ງ, ເມື່ອເອົາສອງສ່ວນມາຕໍ່ໃສ່ກັນເຖິງວ່າຈະເປັນປະເພດໃບດຽວກັນ ແລະ ມີຄຸນລັກສະນະຂອງໃບທະນະບັດຄົບຖ້ວນກໍຕາມ;

2. ຂາດເປັນສາມສ່ວນທາງລວງຕັ້ງ, ເມື່ອເອົາສາມສ່ວນນັ້ນມາຕໍ່ໃສ່ກັນ ເຫັນວ່າ ສ່ວນກາງຂອງທະນະບັດຖືກເສຍຫາຍ ໂດຍທີ່ຮູບສັນຍາລັກ ແລະ ເສັ້ນລວດລາຍຕ່າງໆໃນໃບທະນະບັດບໍ່ກົງກັນ;

3. ຈີກຂາດ ຊຶ່ງສ່ວນທີ່ເຫຼືອບໍ່ເຖິງເຄິ່ງໜຶ່ງຂອງໃບທະນະບັດ;

4. ຖືກປວກກັດ, ຖືກໄຟໄໝ້ ຫຼື ສາເຫດອື່ນ ຊຶ່ງສ່ວນທີ່ເຫຼືອບໍ່ເຖິງເຄິ່ງໜຶ່ງຂອງໃບທະນະບັດ ເຖິງວ່າຍັງມີຂອບຂອງໃບທະນະບັດເບື້ອງໜຶ່ງ ຍັງເຫຼືອຫຼາຍກວ່າເຄິ່ງໜຶ່ງ ຫຼື ຂອບຂອງໃບທະນະບັດຂາດຫາຍໄປ ຍັງເຫຼືອແຕ່ສ່ວນກາງ ຫຼາຍກວ່າເຄິ່ງໜຶ່ງຂອງໃບທະນະບັດ ກໍຕາມ;

5. ຖືກເຈາະຮູ, ຖືກຂີດຂຽນ, ຖືກຕັດ, ຖືກຈີກ ຫຼື ຈູດເຜົາ ໂດຍເຈດຕະນາ.

ຜູ້ທີ່ຄອບຄອງທະນະບັດທີ່ມີລັກສະນະຂ້າງເທິງ ສາມາດເກັບຮັກສາທະນະບັດດັ່ງກ່າວໄວ້ດ້ວຍຕົນເອງ ຫຼື ມອບໃຫ້ທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດ ເກັບຮັກສາ ຫຼື ທຳລາຍ ຕາມລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 12 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳທະນະບັດອອກ ສປປ ລາວ ເກີນອັດຕາສ່ວນທີ່ໄດ້ກຳນົດໄວ້ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນຳເອົາທະນະບັດດີ ຫຼື ທະນະບັດໃບໃໝ່ ໄປຂາຍ ຫຼື ແລກປ່ຽນ ເພື່ອເອົາກຳໄລໃນທຸກຮູບແບບ;

3. ຕັດ, ເຈາະ, ຈີກ, ແຕ້ມ, ຂີດ, ຂຽນ, ພິມ, ຈ້ຳກາ, ຕິດກາ ຫຼື ດ້ວຍວິທີການໃດກໍຕາມ ໃສ່ທະນະບັດ;

4. ນຳເອົາທະນະບັດ ໄປເຮັດອີງປະກອບພິທີທາງສາດສະໜາ ດ້ວຍການພັບ, ເຈາະ, ໜີບ, ຂີດຂຽນ ຫຼື ດ້ວຍຮູບການອື່ນ ທີ່ເປັນສາເຫດເຮັດໃຫ້ທະນະບັດເສື່ອມຄຸນນະພາບ;

5. ນຳໃຊ້ທະນະບັດເຂົ້າໃນສື່ໂຄສະນາ ຫຼື ສື່ອອນລາຍຕ່າງໆ ໂດຍບໍ່ສອດຄ່ອງຕາມຂໍ້ຕົກລົງສະບັບນີ້;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້.

### ມາດຕາ 13 ຂໍ້ຫ້າມສຳລັບພະນັກງານຂອງທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນ

ຫ້າມພະນັກງານຂອງທະນາຄານແຫ່ງ ສປປ ລາວ, ສະຖາບັນການເງິນອື່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ຫຼື ອຳນວຍຄວາມສະດວກ ເພື່ອສະໜອງທະນະບັດໃບໃໝ່ປະເພດຕ່າງໆໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ນຳເອົາທະນະບັດດັ່ງກ່າວ ໄປຂາຍ ຫຼື ແລກປ່ຽນ ເພື່ອເອົາກຳໄລໃນທຸກຮູບແບບ;

2. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງກ່ຽວກັບການຄຸ້ມຄອງທະນະບັດ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້.

## ໝວດທີ 6
## ຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ

**ມາດຕາ 14 ຄວາມຮັບຜິດຊອບຂອງກົມພິມຈຳໜ່າຍ**

ກົມພິມຈຳໜ່າຍ ມີຄວາມຮັບຜິດຊອບ ດັ່ງນີ້:

1. ອອກຄຳແນະນຳກ່ຽວກັບລັກສະນະ ແລະ ເງື່ອນໄຂການແລກປ່ຽນທະນະບັດໃນຂອດຈໍລະຈອນ ພ້ອມທັງໂຄສະນາເຜີຍແຜ່ ແລະ ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

2. ຖອນຄືນທະນະບັດເສື່ອມຄຸນນະພາບອອກຈາກຂອດຈໍລະຈອນ;

3. ກວດນັບ ແລະ ຄັດເລືອກທະນະບັດເສື່ອມຄຸນນະພາບ ທີ່ຜ່ານການຄັດໄຈ້ຈາກທະນາຄານທຸລະກິດ;

4. ແລກປ່ຽນທະນະບັດດີໃຫ້ທະນາຄານທຸລະກິດ;

5. ສະເໜີກົມນະໂຍບາຍເງິນຕາ ເພື່ອພິຈາລະນາການສະເໜີຂໍນຳເອົາທະນະບັດອອກ ສປປ ລາວ ເກີນອັດຕາສ່ວນທີ່ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຢູ່ຂັ້ນສູນກາງ;

6. ຕິດຕາມ, ກວດກາ ການນຳໃຊ້ທະນະບັດ ເຂົ້າໃນສື່ໂຄສະນາ ຫຼື ສື່ອອນລາຍ;

7. ຮັບຜິດຊອບວຽກງານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຄວາມຮັບຜິດຊອບຂອງສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ**

ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຖອນຄືນທະນະບັດເສື່ອມຄຸນນະພາບອອກຈາກຂອດຈໍລະຈອນ ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;

2. ກວດນັບ, ຄັດເລືອກ ທະນະບັດເສື່ອມຄຸນນະພາບທີ່ຜ່ານການຄັດໄຈ້ຈາກທະນາຄານທຸລະກິດ;

3. ແລກປ່ຽນທະນະບັດດີ ໃຫ້ແກ່ທະນາຄານທຸລະກິດ ທີ່ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;

4. ພິຈາລະນາການສະເໜີຂໍນຳທະນະບັດ ອອກ ສປປ ລາວ ເກີນອັດຕາສ່ວນ ທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຢູ່ທ້ອງຖິ່ນທີ່ຕົນເອງຮັບຜິດຊອບ;

5. ຮັບຜິດຊອບວຽກງານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ຄວາມຮັບຜິດຊອບຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ແລກປ່ຽນທະນະບັດດີ, ທະນະບັດທີ່ສາມາດແລກປ່ຽນ ແລະ ແລກປ່ຽນທະນະບັດເສື່ອມຄຸນນະພາບ ໃຫ້ແກ່ມວນຊົນທົ່ວໄປ;

2. ຄັດໄຈ້ທະນະບັດດີ ແລະ ທະນະບັດເສື່ອມຄຸນນະພາບອອກຈາກກັນ ຕາມລະບຽບການທີ່ກ່ຽວຂ້ອງ;

3. ແລກປ່ຽນທະນະບັດເສື່ອມຄຸນນະພາບກັບທະນະບັດດີ ນຳກົມພິມຈຳໜ່າຍ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ;

4. ຮັບຜິດຊອບວຽກງານອື່ນ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

## ໝວດທີ 7
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17 ການນຳທະນະບັດອອກຈາກ ສປປ ລາວ ໂດຍບໍ່ຖືກຕ້ອງ**

ຜູ້ໃດທີ່ນຳທະນະບັດອອກຈາກ ສປປ ລາວ ເກີນມູນຄ່າ ຫຼື ອັດຕາສ່ວນທີ່ກຳນົດໄວ້ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝທາງບໍລິຫານ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າທີ່ເກີນ.

ກໍລະນີຍັງສືບຕໍ່ກະທຳ ຫຼື ກະທຳເປັນອາຈິນ ຈະຖືກປັບໃໝທາງບໍລິຫານ ສອງເທົ່າ ຂອງມູນຄ່າປັບໃໝ ໃນຄັ້ງທີ່ຜ່ານມາ.

**ມາດຕາ 18 ການນຳເອົາທະນະບັດດີ ຫຼື ໃບໃໝ່ ໄປຂາຍ ຫຼື ແລກປ່ຽນ ເພື່ອເອົາກຳໄລ**

ຜູ້ໃດທີ່ນຳເອົາທະນະບັດດີ ຫຼື ໃບໃໝ່ໄປຂາຍ ຫຼື ແລກປ່ຽນ ເພື່ອເອົາກຳໄລ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝທາງບໍລິຫານ 1.000.000 ກີບ;
3. ຄັ້ງທີສາມ ຈະຖືກປັບໃໝທາງບໍລິຫານ 3.000.000 ກີບ.

ກໍລະນີຍັງສືບຕໍ່ກະທຳຜິດ ຫຼື ກະທຳເປັນອາຈິນ ຈະຖືກປັບໃໝທາງບໍລິຫານ 10.000.000 ກີບຕໍ່ຄັ້ງ.

**ມາດຕາ 19 ການນຳໃຊ້ທະນະບັດ ເຂົ້າໃນສື່ໂຄສະນາ ຫຼື ສື່ອອນລາຍ ໂດຍບໍ່ຖືກຕ້ອງ**

ຜູ້ໃດທີ່ນຳໃຊ້ທະນະບັດ ເຂົ້າໃນສື່ໂຄສະນາ ຫຼື ສື່ອອນລາຍຕ່າງໆ ໂດຍບໍ່ສອດຄ່ອງກັບມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກໄວ້;
2. ຄັ້ງທີສອງ ຈະຖືກປັບໃໝທາງບໍລິຫານ 2.000.000 ກີບ;
3. ຄັ້ງທີສາມ ຈະຖືກປັບໃໝທາງບໍລິຫານ 3.000.000 ກີບ;

ໃນກໍລະນີຍັງສືບຕໍ່ກະທຳ ຫຼື ກະທຳເປັນອາຈິນ ຈະຖືກປັບໃໝທາງບໍລິຫານ ສອງເທົ່າ ຂອງມູນຄ່າປັບໃໝຄັ້ງຜ່ານມາ.

**ມາດຕາ 20 ການເຮັດໃຫ້ທະນະບັດເສື່ອມຄຸນນະພາບ**

ຜູ້ໃດທີ່ມີເຈດຕະນາ ຕັດ, ເຈາະ, ຈີກ, ແຕ້ມ, ຂີດ, ຂຽນ, ພິມ,ຈ້ຳກາ, ຕິດກາ ໃສ່ທະນະບັດ ຫຼື ດ້ວຍວິທີການໃດກໍຕາມ ທີ່ເຮັດໃຫ້ທະນະບັດເສື່ອມຄຸນນະພາບ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

ມາດຕາ 21 ມາດຕະການທາງວິໄນ

ພະນັກງານຂອງທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດວິໄນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ສັນຍາແຮງງານ ແລະ/ຫຼື ກົດລະບຽບພາຍໃນຂອງທະນາຄານທຸລະກິດ.

## ໝວດທີ 8

## ບົດບັນຍັດສຸດທ້າຍ

ມາດຕາ 22 ການຈັດຕັ້ງປະຕິບັດ

ມອບໃຫ້ກົມພິມຈໍາໜ່າຍ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ເປັນເຈົ້າການແນະນໍາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ມາດຕາ 23 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ກໍານົດວ່າດ້ວຍມາດຕະຖານຄຸນນະພາບຂອງທະນະບັດໃນຂອດຈໍລະຈອນ ສະບັບເລກທີ 04/ທຫລ, ລົງວັນທີ 01 ສິງຫາ 2007.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ

ສອນໄຊ ສິດພະໄຊ